## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 19 ກຸມພາ 2023 (02-19-2023)

---

# ມັນເປັນການຖວາຍພຣະກຽດຕິຍົດແດ່ພຣະເຈົ້າບໍ່?

*ແມ່ນຫຍັງຄືກຽດສັກສີທີ່ຍິ່ງໃຫຍ່ທີ່ສຸດທີ່ທ່ານຫຼືໃຜຜູ້ນຶ່ງທີ່ທ່ານຮູ້ຈັກໄດ້ຮັບ?*

**ຈຸດສຳຄັນໃນບົດຮຽນ:** ພຣະສຸຣະສຽງຂອງພຣະເຈົ້ານຳພາເຮົາໃຫ້ຖວາຍກຽດແລະໃຫ້ສຳເຣັດຜົນຕໍ່ເປົ້າໝາຍພຣະອົງສເມີ.
**ພຣະຄັມພີຕອບສນອງຕໍ່ຊີວິດ:**
ເມື່ອພວກເຮົາເພັ່ງເບິ່ງງານສິລປະຊິ້ນນຶ່ງ, ພວກເຮົາບໍ່ໄດ້ຕື່ນຕາຕື່ນໃຈເທິງແຜ່ນຜືນຜ້ານັ້ນ. ພວກເຮົາບໍ່ຕື່ນເຕັ້ນກັບຂອບເງົາສີຟ້າແຖບໃດແຖບນຶ່ງໃນຮູບແຕ້ມນັ້ນ. ພວກເຮົາມີຄວາມອັສຈັນໃຈໃນສິລປິນ(artist)ທີ່ປັ້ນຮູບນັ້ນ. ເວົ້າເຖິງຮູບປັ້ນ ດາວິດ ໂດຍສິລປິນ ໄມໂກ ແອງເຈໂລ (Michel Angelo). ມັນໄດ້ຖືກພິຈາລະນາວ່າເປັນນຶ່ງໃນຮູບປັ້ນທີ່ດີທີ່ສຸດໃນໂລກທັງໝົດ. ແຕ່ບໍ່ມີໃຜຍ່າງເຂົ້າໄປໃນຫໍພິພິດທະພັນ: La Galleria dell'Accademia di Firenze ໃນເມືອງຟລໍເຣັນຊ໌ (Florence), ປະເທດອີຕາລີ, ແລະ<u>ປລາດໃຈວ່າຫີນອ່ອນມີສີຂາວພຽງໃດ</u>? ສີຂາວມັນເປັນຊິ້ນສ່ວນພິເສດຂອງຫີນອ່ອນສີຂາວ, ຄວາມປລາດໃຈຂອງທຸກໆຄົນແມ່ນມາຈາກສິ່ງທີ່ ໄມໂກ ແອງເຈໂລ ໄດ້ເຮັດກັບຫີນອ່ອນນັ້ນ.

ພວກເຮົາຕື່ນຕາຕື່ນໃຈທີ່ຊາຍໜຸ່ມອາຍຸພຽງ 26 ປີຄົນນຶ່ງໄດ້ອົດສາແກະສລັກເອົາ<u>ລາຍລະອຽດທີ່ເປັນໜ້າເຫຼືອເຊື່ອ</u>ດັ່ງກ່າວໃສ່ໃນຫີນອ່ອນ. ຮູບແກະສລັກສູງເກືອບ 17 ຟຸດ, ນີ້ບໍ່ແມ່ນໂຄງການທ້າຍອາທິດ(weekend project). ໄມໂກ ແອງເຈໂລ ໄດ້ເຮັດວຽກສຳລັບການແກະສລັກນີ້ເປັນເວລາເຖິງ 2 ປີ. ພວກເຮົາບໍ່ໄດ້ໃຫ້ກຽດສັກສີແກ່ຮູບປັ້ນ; ແຕ່ພວກເຮົາໃຫ້ກຽດສັກສີແກ່ຜູ້ປັ້ນ. ມັນບໍ່ແມ່ນດາວິດຊື່ໆ; ມັນແມ່ນດາວິດຂອງ ໄມໂກ ແອງເຈໂລ. ພວກເຮົາບໍ່ສາມາດມອງເບິ່ງຮູບປັ້ນນີ້ ໂດຍປາສຈາກການຄິດເຖິງ ໄມໂກ ແອງເຈໂລ. <u>ໃນຖານະທີ່ເປັນການຊົງສ້າງຂອງພຣະເຈົ້າ</u>, <u>ຊີວິດຂອງພວກເຮົາແມ່ນຕ້ອງຊີ້ໄປຫາຜູ້ຊົງສ້າງຂອງພວກເຮົາ</u>. ພຣະເຈົ້າຊົງຮຽກເອີ້ນພວກເຮົາໃຫ້ດຳເນີນຊີວິດເພື່ອສງ່າຣາສີຂອງພຣະອົງ- ແລະ**ຢູ່ໃນສງ່າຣາສີຂອງພຣະອົງນີ້ພວກເຮົາພົບພໍ້ຈຸດປະສົງທີ່ຍິ່ງໃຫຍ່ທີ່ສຸດ.**

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ໂຢຮັນ 17:1-3</u>

*[1]ເມື່ອພຣະເຢຊູຊົງກ່າວຖ້ອຍຄຳເຫລົ່ານີ້ແລ້ວ ພຣະອົງກໍຊົງເງີຍພຣະພັກຂຶ້ນເບິ່ງຟ້າໂດຍຊົງກ່າວວ່າ, "ພຣະບິດາເອີຍ, ເຖິງເວລາແລ້ວ*
*ຂໍຊົງໂຜດໃຫ້ພຣະບຸດຂອງພຣະອົງໄດ້ຮັບກຽດຕິຍົດ ເພື່ອພຣະບຸດຈະໄດ້ຖວາຍກຽດຕິຍົດແດ່ພຣະອົງ. [2]ເໝືອນດັ່ງພຣະອົງໄດ້ຊົງປະ-*
*ທານໃຫ້ພຣະບຸດມີສິດອຳນາດເໜືອມະນຸດທັງປວງ ເພື່ອໃຫ້ພຣະບຸດປະທານຊີວິດອັນຕລອດໄປເປັນນິດ ແກ່ທຸກຄົນທີ່ພຣະອົງໄດ້ຊົງ*
*ມອບໃຫ້ແກ່ພຣະບຸດນັ້ນ. [3]ນີ້ແຫລະ, ແມ່ນຊີວິດອັນຕລອດໄປເປັນນິດ ຄືທີ່ເຂົາຮູ້ຈັກພຣະອົງຜູ້ຊົງເປັນພຣະເຈົ້າຫນຶ່ງແທ້ອົງດຽວແລະ*
*ຮູ້ຈັກພຣະເຢຊູຄຣິດທີ່ພຣະອົງຊົງໃຊ້ມາ.*

ຂໍ້ຄວາມໃນພຣະຄັມພີຕອນນີ້ມາຮອດວາລະສຸດທ້າຍຂອງການສົນທະນາຢູ່ຫ້ອງຊັ້ນເທິງຂອງພຣະເຢຊູທີ່ເລີ້ມຕົ້ນໃນໂຢຮັນ ບົດທີ່ 13. ເຫສການປັສຄາໄດ້ສິ້ນສຸດລົງ ແລະຢູດາກໍອອກໄປເພື່ອເລີ້ມຕົ້ນທໍລະຍົດຕໍ່ພຣະອົງ. ພຣະເຢຊູໄດ້ຊົງ "ແຫງນພຣະພັກ(ໜ້າ)ສູ່ສວັນ" ຊຶ່ງແມ່ນວິທີການອະທິຖານຕາມປະເພນີ. ຕາມປົກກະຕິແລ້ວຜູ້ຄົນໄດ້ອະທິຖານໂດຍການມືນຕາ, ໃນຂນະທີ່ເງີຍໜ້າສູ່ສວັນ. ພຣະເຢ

ຊູໄດ້ຊົງອະທິຖານຕໍ່ "**ພຣະບິດາ**" ຂອງພຣະອົງຊຶ່ງເປັນຄຳທີ່ພຣະອົງຊົງພໍພຣະທັຍສຳລັບ**ພຣະເຈົ້າ** ໃນເວລາທີ່ພຣະອົງຊົງອະທິຖານ. ໃນແບບຢ່າງການອະທິຖານ, ພຣະເຢຊູໄດ້ຊົງບອກພວກເຮົາໃຫ້ຮຽກເອີ້ນຫາພຣະເຈົ້າໃນຖານະພຣະບິດາທີ່ຊົງຮັກແພງຊຶ່ງຊົງມີພຣະທັຍກວ້າງຂວາງເອື້ອເຟື້ອເຜື່ອແຜ່ ແລະຊົງຍິນດີທີ່ຈະຕອບສນອງຄຳອ້ອນວອນອະທິຖານຂອງພວກເຮົາ (ມທ 6:9-13; 7:7-11).

ພຣະເຢຊູຊົງໄດ້ສັງເກດເຫັນວ່າ "<u>**ເວລາມາຮອດແລ້ວ**</u>". ພຣະອົງຊົງຮູ້ຢ່າງຈິງຈັງກ່ຽວກັບເວລາອັນສັກສິດ. ພຣະອົງບໍ່ໄດ້ຊົງຂໍສິ່ງໃດຈາກພຣະເຈົ້າໄວຫຼືຊ້າເກີນໄປ, ພຽງແຕ່ເວລາອັນສົມບູນແບບຂອງພຣະເຈົ້າເທົ່ານັ້ນ. ພຣະເຢຊູຊົງອະທິຖານຕໍ່ພຣະເຈົ້າພຣະບິດາໃຫ້ຊົງຖວາຍພຣະກຽດຕິຍົດແດ່ພຣະເຈົ້າພຣະບຸດ. ສຳລັບບາງຄົນ, ນີ້ຄົງຈະເບິ່ງຄືວ່າເປັນການເຫັນແກ່ຕົວ. ຢ່າງໃດກໍດີ, ນີ້ແມ່ນຄຳຮ້ອງຂໍທີ່ມີພຣະເຈົ້າເປັນສູນກາງທີ່ສຸດ. ວິທີທາງທີ່ພຣະເຈົ້າພຣະບິດາທີ່ຈະຊົງຖວາຍພຣະກຽດຕິຍົດແດ່ພຣະເຈົ້າພຣະບຸດນັ້ນແມ່ນພຣະອົງຈະຊົງຄຶງພຣະບຸດເທິງໄມ້ກາງແຂນ. ມັນຈະຢູ່ເທິງໄມ້ກາງແຂນນັ້ນເອງທີ່ພຣະເຢຊູຈະຊົງນຳເອົາພຣະກຽດຕິຍົດອັນຍິ່ງໃຫຍ່ທີ່ສຸດມາສູ່ພຣະບິດາຂອງພຣະອົງ. ໂດຍການອ້ອນວອນຂໍເວລາຂອງພຣະອົງເທິງໄມ້ກາງແຂນ, <u>ພຣະເຢຊູຊົງຍອມຮັບເອົາພຣະປະສົງຂອງພຣະເຈົ້າພຣະບິດາເຖິງແມ່ນວ່ານັ້ນມັນໝາຍເຖິງການທໍຣະມານຢ່າງແສນສາຫັດເທິງໄມ້ກາງແຂນ</u>.

ຄຳວ່າ "ຖວາຍພຣະກຽດຕິຍົດ" ຍັງສາມາດໝາຍຄວາມວ່າ "ຂຍາຍ" ຫຼື "ຍົກຂຶ້ນ." ພຣະເຢຊູໄດ້ຊົງຂໍໃຫ້ພຣະບິດາຂອງພຣະອົງໃຫ້ຍົກພຣະອົງຂຶ້ນເທິງໄມ້ກາງແຂນ ເພື່ອໃຫ້ຜູ້ຄົນສາມາດເບິ່ງທີ່ພຣະເຢຊູຢ່າງໃກ້ຊິດແລະມີຄວາມເຂົ້າໃຈຈາກມຸມມອງທີ່ສູງຂຶ້ນກ່ຽວກັບພຣະເຈົ້າພຣະບິດາ. ພາຍໃນຄຳອະທິຖານນັ້ນມີສິ່ງທີ່ພວກເຮົາຄວນອະທິຖານເຊັ່ນດຽວກັນ: "<u>**ຂ້າແດ່ພຣະເຈົ້າ, ຂໍຊົງໂຜດໃຫ້ຜູ້ຄົນເບິ່ງຊີວິດຂອງຂ້ານ້ອຍຢ່າງໃກ້ຊິດ, ໂດຍສະເພາະໃນເວລາທີ່ຂ້ານ້ອຍມີຄວາມທຸກທໍຣະມານ, ເພື່ອວ່າພວກເຂົາເຈົ້າຈະຖືກດຶງດູດໃຫ້ຖວາຍພຣະກຽດຕິຍົດແດ່ພຣະອົງ.**</u>"

*ການຖວາຍພຣະກຽດຕິຍົດແດ່ພຣະເຈົ້າໃນຊີວິດຂອງພວກເຮົາຊ່ວຍນຳຄົນອື່ນມາຫາພຣະຄຣິດໄດ້ແນວໃດ?*

## 2. <u>ໂຢຮັນ 17:4-5</u>

*[4]ຂ້ານ້ອຍໄດ້ຖວາຍກຽດຕິຍົດແດ່ພຣະອົງໃນໂລກ ຂ້ານ້ອຍໄດ້ເຮັດກິຈການທີ່ພຣະອົງຊົງໃຫ້ຂ້ານ້ອຍເຮັດນັ້ນສຳເຣັດແລ້ວ. [5]ບັດນີ້ພຣະບິດາເອີຍ, ຂໍຊົງໂຜດໃຫ້ຂ້ານ້ອຍມີກຽດຕິຍົດຕໍ່ພຣະພັກຂອງພຣະອົງເອງ ຄືກຽດຕິຍົດທີ່ຂ້ານ້ອຍມີກັບພຣະອົງກ່ອນໂລກບໍ່ທັນມີນັ້ນ.*

ພຣະເຢຊູໄດ້ປະກາດວ່າພຣະອົງໄດ້ຊົງຖວາຍພຣະກຽດຕິຍົດແດ່ພຣະບິດາຂອງພຣະອົງແລ້ວ. ພຣະອົງໄດ້ຊົງກະທຳໂດຍ "*ຂ້ານ້ອຍ-ໄດ້ເຮັດກິຈການທີ່ພຣະອົງຊົງໃຫ້ຂ້ານ້ອຍເຮັດນັ້ນສຳເຣັດແລ້ວ.*" (ຂໍ້ 4). ວຽກງານທີ່ໄດ້ມອບໝາຍແກ່ພຣະເຢຊູບໍ່ແມ່ນເຣື່ອງງ່າຍ. ພຣະເຢຊູຊົງເວົ້າກັບຝູງຄົນເປັນຈຳນວນຫຼວງຫຼາຍ, ພຣະອົງໄດ້ປິ່ນປົວຜູ້ຄົນນັບບໍ່ຖ້ວນ, ພຣະອົງໄດ້ຝຶກອົບຮົມບັນດາພວກສາວົກຂອງພຣະອົງ, ແລະພຣະອົງໄດ້ເດີນທາງໄປທຸກບ່ອນດ້ວຍພຣະບາດ(ຕີນ). ພຣະອົງໄດ້ຊົງປະເຊີນໜ້າກັບການຕຳໜິຕິຕຽນ ແລະການຕໍ່ຕ້ານຄັດຄ້ານຢ່າງບໍ່ຢຸດຢັ້ງ. <u>**ເຖິງຢ່າງໃດກໍຕາມ, ຈຸດສຸດຍອດຂອງພຣະຣາຊກິຈຂອງພຣະອົງແມ່ນເມື່ອພຣະອົງໄດ້ຊົງສິ້ນພຣະຊົນຢູ່ເທິງໄມ້ກາງແຂນ**</u>. ຖ້າຫາກວ່າພຣະອົງໄດ້ຊົງຍົກເລີກກ່ອນທີ່ຈະໄປທີ່ໄມ້ກາງແຂນ, ຄວາມພະຍາຍາມກ່ອນໜ້ານີ້ຂອງພຣະອົງຈະຫວ່າງເປົ່າບໍ່ມີຫຍັງໝົດ. <u>ເພື່ອໃຫ້ວຽກງານຂອງພຣະອົງເປັນທີ່ຖວາຍພຣະກຽດແດ່ພຣະບິດາ</u>, <u>ພຣະອົງຊົງຕ້ອງກະທຳໃຫ້ສຳເຣັດ</u>.

ພຣະເຈົ້າບໍ່ໄດ້ຖືກຖວາຍພຣະກຽດຕິຍົດພຽງແຕ່ໂດຍການເລີ້ມຕົ້ນເຮັດວຽກຂອງພວກເຮົາຫຼືໂດຍການເຮັດວຽກໜັກໃນຊົ່ວລະຍະນຶ່ງເທົ່ານັ້ນ. <u>ພຣະອົງຊົງຖືກຖວາຍພຣະກຽດຕິຍົດໃນເມື່ອພວກເຮົາໄດ້ເຮັດວຽກທີ່ພຣະອົງໄດ້ຊົງມອບໝາຍໃຫ້ພວກເຮົາເຮັດນັ້ນໄດ້ສຳເຣັດແລ້ວ</u>. ອັຄສາວົກ ໂປໂລ ໄດ້ກະຕຸ້ນໃຈຊາວຄາລາເຕັຽວ່າ, "*ຢ່າໃຫ້ພວກເຮົາເມື່ອຍລ້າໃນການເຮັດດີ ເພາະວ່າຖ້າໃຈພວກເຮົາບໍ່ທໍ້ຖອຍ ເຮົາກໍຈະໄດ້ເກັບກ່ຽວຜົນຕາມເວລາອັນສົມຄວນ.*" (ຄລຕ 6:9). ຖ້າພວກເຮົາຢຸດກ່ອນທີ່ພວກເຮົາເຮັດສຳເຣັດວຽກງານທີ່ພຣະເຈົ້າໄດ້ຊົງມອບແກ່ພວກເຮົາ ນັ້ນສະແດງວ່າພວກເຮົາໄດ້ເຊື່ອຟັງພຽງບາງສ່ວນເທົ່ານັ້ນ ແລະ <u>**ການເຊື່ອຟັງພຽງບາງສ່ວນ ກໍຄືການບໍ່ເຊື່ອຟັງເລີຍນັ້ນລະ**</u>.

ພຣະເຢຊູຊົງໄດ້ອະທິຖານວ່າ, ດ້ວຍເຫດຜົນຂອງການສຳເຣັດຂອງວຽກງານທີ່ພຣະເຈົ້າພຣະບິດາໄດ້ຊົງປະທານໃຫ້ແກ່ພຣະອົງ, ພຣະອົງຈະຊົງໄດ້ຮັບພຣະກຽດຕິຍົດເຊັ່ນດຽວກັນກັບພຣະກຽດຕິຍົດທີ່ພຣະອົງຊົງໄດ້ຮັບກ່ອນໂລກເລີ້ມຕົ້ນ. ພຣະເຢຊູບໍ່ໄດ້ຊົງຖືວ່າຕຳແໜ່ງອັນສູງສົ່ງຂອງພຣະອົງເປັນສິ່ງທີ່ຍຶດຫວງໄວ້. ແຕ່ກົງກັນຂ້າມ, ພຣະອົງໄດ້ຊົງສລະພຣະອົງເອງແລະຊົງກຳເນີດເປັນມະນຸດ, ສິ້ນພຣະຊົນເທິງໄມ້ກາງແຂນ (ຟລປ 2:5-11). ເມື່ອພຣະເຢຊູໄດ້ສຳເລັດວຽກງານຂອງພຣະອົງຢູ່ເທິງແຜ່ນດິນໂລກ, ພຣະອົງໄດ້ຊົງລໍຖ້າທີ່ຈະໄດ້ກັບຄືນໄປຫາພຣະບິດາແລະຈະໄດ້ມີສ່ວນໃນພຣະຣັສມີພາບຂອງພຣະອົງອີກເທື່ອນຶ່ງ. ໃນເມື່ອພວກເຮົາໄດ້ສຳເຣັດພາຣະກິຈທີ່ພຣະເຈົ້າໄດ້ຊົງມອບໝາຍໃຫ້ແກ່ພວກເຮົາ, **ພຣະເຈົ້າຊົງໄດ້ຮັບພຣະກຽດຕິຍົດ ແລະພວກເຮົາໄດ້ຮັບຄວາມຊົມຊື່ນຍິນດີກັບການສາມັກຄີທັມກັບອົງພຣະຜູ້ເປັນເຈົ້າຂອງພວກເຮົາ.**

*ມີອຸປສັກຫຍັງແດ່ທີ່ກີດຂວາງພວກເຮົາໃນການຈັດລະດັບຄວາມສຳຄັນຂອງວຽກງານຂອງພຣະເຈົ້າ?*

## 3. ໂຢຮັນ 17:6-9

*6 "ຂ້ານ້ອຍໄດ້ສະແດງພຣະນາມຂອງພຣະອົງ ແກ່ຄົນທັງຫລາຍທີ່ພຣະອົງໄດ້ຊົງປະທານໃຫ້ແກ່ຂ້ານ້ອຍຈາກມະນຸສໂລກ ຄົນເຫລົ່າ-*
*ນັ້ນເປັນຂອງພຣະອົງແລ້ວ ແລະພຣະອົງໄດ້ຊົງປະທານເຂົາໃຫ້ແກ່ຂ້ານ້ອຍ ແລະເຂົາໄດ້ຖືຮັກສາພຣະທັມຂອງພຣະອົງແລ້ວ. 7 ບັດ-*
*ນີ້ເຂົາຊາບແລ້ວວ່າ ທຸກສິ່ງທີ່ພຣະອົງຊົງປະທານໃຫ້ແກ່ຂ້ານ້ອຍນັ້ນມາຈາກພຣະອົງ. 8 ເພາະວ່າຖ້ອຍຄຳທັງຫລາຍທີ່ພຣະອົງຊົງປະ-*
*ທານໃຫ້ແກ່ຂ້ານ້ອຍນັ້ນ ຂ້ານ້ອຍໄດ້ໃຫ້ເຂົາແລ້ວ ແລະເຂົາໄດ້ຮັບໄວ້ ແລະເຂົາຮູ້ແນ່ວ່າຂ້ານ້ອຍມາຈາກພຣະອົງ ທັງເຊື່ອວ່າພຣະ-*
*ອົງໄດ້ຊົງໃຊ້ຂ້ານ້ອຍມາ. 9 ຂ້ານ້ອຍອ້ອນວອນເພື່ອເຂົາ ຂ້ານ້ອຍບໍ່ໄດ້ອ້ອນວອນເພື່ອໂລກ ແຕ່ເພື່ອຄົນເຫລົ່ານັ້ນທີ່ພຣະອົງໄດ້ຊົງປະ-*
*ທານແກ່ຂ້ານ້ອຍ ເພາະວ່າເຂົາເປັນຂອງພຣະອົງ.*

ໃນຂໍ້ທີ່ 6, ພຣະເຢຊູໄດ້ຊົງເລີ້ມຕົ້ນອະທິຖານເພື່ອບັນດາອັຄສາວົກຂອງພຣະອົງ. ພຣະອົງໄດ້ຊົງເປີດເຜີຍພຣະນາມຂອງພຣະເຈົ້າແກ່ພວກເຂົາເຈົ້າ. ນັ້ນຄືພຣະອົງຊົງໄດ້ສັ່ງສອນພວກເພິ່ນກ່ຽວກັບພຣະລັກສນະຂອງພຣະເຈົ້າວ່າແມ່ນແນວໃດ. ພຣະອົງໄດ້ຊົງທຳຢ່າງນັ້ນໂດຍ: ການສັ່ງສອນແລະການເປັນຕົວຢ່າງຂອງພຣະອົງ. ພຣະອົງໄດ້ຊົງອະທິຖານຕລອດກາງຄືນກ່ອນທີ່ຈະເລືອກເອົາບັນດາອັຄສາວົກຂອງພຣະອົງ: *"ໃນຄາວນັ້ນພຣະອົງໄດ້ສະເດັດຂຶ້ນພູເພື່ອຈະໄຫວ້ວອນ ແລະໄດ້ຊົງໄຫວ້ວອນພຣະເຈົ້າຢູ່ຕລອດຄືນ. ຄັນຮຸ່ງເຊົ້າແລ້ວພຣະອົງໄດ້ຊົງເອີ້ນເອົາພວກສິດຂອງຕົນມາ ຈາກພວກສິດນັ້ນພຣະອົງຊົງເລືອກເອົາສິບສອງຄົນແລ້ວຊົງຕັ້ງຊື່ວ່າ **ອັຄສາ-ວົກ**."* (ລກ 6:12-13), ແລະດຽວນີ້ພຣະອົງຊົງອະທິຖານເພື່ອພວກເພິ່ນອີກ. ເພາະວ່າພຣະເຢຊູຊົງຮູ້ວ່າພຣະບິດາຂອງພຣະອົງໄດ້ຊົງມອບບັນດາຊາຍເຫຼົ່ານີ້ໃຫ້ແກ່ພຣະອົງ, ພຣະອົງຈຶ່ງມີຄວາມຂຍັນໝັ່ນພຽນໃນການສອນເຂົາເຈົ້າກ່ຽວກັບພຣະລັກສນະຂອງພຣະເຈົ້າແລະຊົງນຳພາພວກເຂົາເຈົ້າໄປສູ່ຄວາມສັມພັນສ່ວນຕົວກັບພຣະເຈົ້າ.

*ໃຜແດ່ເປັນບາງຄົນທີ່ພຣະເຈົ້າໄດ້ຊົງໃຊ້ເພື່ອໃຫ້ທ່ານກາຍເປັນລູກສິດຂອງພຣະເຢຊູ?*

ພຣະເຢຊູໄດ້ຊົງຮັບຮູ້ວ່າບັນດາອັຄສາວົກຂອງພຣະອົງມາຈາກໂລກ. ດ້ວຍເຫດນີ້ເອງທີ່ພວກເຂົາເຈົ້າມີ ຄວາມປະພຶດເໝືອນຊາວໂລກຕລອດມາ. ໃນວິທີການສິດສອນຄົນເຫຼົ່ານີ້, ພຣະເຢຊູໄດ້ຊົງມອບພຣະຄຳທີ່ພຣະເຈົ້າໄດ້ຊົງປະທານໃຫ້ໃຫ້ແກ່ບັນດາອັຄສາວົກເຫຼົ່ານີ້, ແລະບັດນີ້ພຣະອົງໄດ້ປະກາດວ່າ ***"ເຂົາໄດ້ຖືຮັກສາພຣະທັມຂອງພຣະອົງແລ້ວ."*** (ຂໍ້ 6). ບັນດາພວກອັຄສາວົກຮູ້ວ່າທຸກສິ່ງທຸກຢ່າງທີ່ພຣະເຢຊູໄດ້ຊົງມອບໃຫ້ນັ້ນແມ່ນມາຈາກພຣະເຈົ້າພຣະບິດາ. ມັນເປັນການອັສຈັນຊ່ຳໃດໃນເມື່ອຜູ້ຄົນສາມາດປະກາດວ່າ: ຄຳເວົ້າແລະຄວາມເຊື່ອຂອງທ່ານມາຈາກພຣະເຈົ້າ. ບັນດາພວກສາວົກໄດ້ເຂົ້າໃຈໃນເຣື່ອງນີ້ເພາະວ່າສິ່ງທີ່ພຣະເຢຊູຊົງກ່າວນັ້ນຖືກຢືນຢັນຢູ່ສເມີໃນພຣະຄັມພີ, ແລະພຣະຄຳເຫຼົ່ານັ້ນໄດ້ຮັບການສນັບສນູນດ້ວຍພຣະລັງຣິດທານຸພາບຂອງພຣະເຈົ້າ.

ພຣະເຢຊູໄດ້ຊົງອະທິຖານເພື່ອບັນດາຜູ້ທີ່ພຣະບິດາຂອງພຣະອົງໄດ້ຊົງມອບໃຫ້ພຣະອົງ. ພຣະອົງຊົງຮູ້ວ່າພວກເຂົາເຈົ້າຈະຖືກກະ

ຈັດກະຈາຍໄປໂດຍຄວາມຢ້ານກົວໃນຕອນກາງຄືນ. ພຣະອົງໄດ້ຊົງເຫັນລ່ວງໜ້າວ່າເປໂຕຈະປະຕິເສດການຮູ້ຈັກພະອົງ. ມານຊາຕານຈະເຮັດທຸກສິ່ງທຸກຢ່າງທີ່ມັນສາມາດເຮັດໄດ້ເພື່ອທຳລາຍຄຣິສຕະຈັກກ່ອນທີ່ຈະຖືກສ້າງຂຶ້ນໃຫ້ສຳເຣັດ. ມີຄວາມສະດວກສະບາຍຢ່າງຫຼວງຫຼາຍສຳລັບບັນດາຜູ້ທີ່ເຊື່ອໃນການຮູ້ວ່າພຣະຄຣິດຍັງສືບຕໍ່ອ້ອນວອນອະທິຖານສຳລັບພວກເຮົາເຖິງແມ້ແຕ່ໃນທຸກມື້ນີ້. **<u>ພວກເຮົາຍັງສາມາດຖວາຍພຣະກຽດແດ່ພຣະເຈົ້າໃນຂນະທີ່ພວກເຮົາອ້ອນວອນອະທິຖານເພື່ອຄົນອື່ນ</u> <u>ແລະເຮັດໃຫ້ພວກເຂົາເຈົ້າກາຍເປັນລູກສິດເໝືອນດັ່ງພຣະເຢຊູໄດ້ຊົງສິດສອນບັນດາຜູ້ທີ່ຕິດຕາມພຣະອົງ</u>**.

*ກຸ່ມຂອງພວກເຮົາຈະຊ່ວຍກັນແລະກັນສ້າງຄົນອື່ນໃຫ້ກາຍມາເປັນສາວົກໃຫ້ດີຂຶ້ນໄດ້ແນວໃດ?*

## ນຳໃຊ້ໃນຊີວິດ

ພຣະສຸຣະສຽງຂອງພຣະເຈົ້ານຳພາເຮົາໃຫ້ຖວາຍກຽດແລະໃຫ້ສຳເຣັດຜົນຕໍ່ເປົ້າໝາຍພຣະອົງສເມີ. ຄວາມຈິງນີ້ຈະມີຜົນກະທົບຕໍ່ຊີວິດຂອງທ່ານຢ່າງໃດ? ຈົ່ງໃຊ້ນຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ຈົ່ງຈົດບັນຊີ.** ຈົ່ງຈົດບັນຊີລາຍການສິ່ງທີ່ພຣະເຈົ້າໄດ້ຊົງບອກທ່ານໃຫ້ເຮັດ. ຈົ່ງໝາຍໂຕ "**F**" (**F**inished) ໃຫຍ່ໃສ່ຂ້າງບັນຊີທີ່ທ່ານໄດ້ເຮັດສຳເຣັດແລ້ວ. ຈົ່ງໝາຍໂຕ "**U**" (**U**nfinished) ໃຫຍ່ໃສ່ຂ້າງບັນຊີທີ່ທ່ານເຮັດຍັງບໍ່ທັນສຳເລັດເທື່ອ. ຈົ່ງອະທິຖານທູນຂໍຕໍ່ພຣະເຈົ້າໃນຄຳແນະນຳເພື່ອຄວາມສຳເຣັດໃນສິ່ງເຫຼົ່ານັ້ນ.
- **ຈົ່ງອະທິຖານເພື່ອ.** ຈົ່ງອະທິຖານເພື່ອຄົນອື່ນໆ. ອະທິຖານເພື່ອພວກເພິ່ນໂດຍການອອກຊື່, ທູນຂໍຕໍ່ພຣະເຈົ້າໃຫ້ຊົງທຳງານໃນຊີວິດຂອງພວກເພິ່ນ ໃນວິທີທາງທີ່ຈະນຳພຣະກຽດຕິຍົດມາສູ່ພຣະເຈົ້າ.
- **ຈົ່ງສ້າງສາວົກ.** ທ່ານສາມາດໃຫ້ພຣະກຽດຕິຍົດແດ່ພຣະເຈົ້າໃນຂນະທີ່ທ່ານສ້າງສາວົກ ແລະນຳພາຄົນອື່ນໃນການດຳເນີນຊີວິດຢ່າງເລິກເຊິ່ງກັບພຣະເຈົ້າ. ຈົ່ງທູນຂໍຕໍ່ພຣະເຈົ້າໃຫ້ຊົງນຳພາທ່ານໄປສູ່ບຸກຄົນທີ່ທ່ານສາມາດສ້າງເປັນສາວົກ. ຈົ່ງປ່ອຍໃຫ້ພຣະເຈົ້າຊົງໃຊ້ທ່ານເພື່ອພຣະກຽດຕິຍົດຂອງພຣະອົງໃນຊີວິດຂອງຄົນອື່ນ.

ດັ່ງດຽວກັບຮູບປັ້ນ ດາວິດ ຂອງໄມໂກ ແອງເຈໂລ, <u>ແຕ່ລະຄົນທ່າມກາງພວກເຮົາເປັນສິລປະຊິ້ນເອກຊຶ່ງຖືກສ້າງຂຶ້ນມາບໍ່ແມ່ນໂດຍຜູ້ໃດ ນອກເໜືອຈາກພຣະເຈົ້າແຫ່ງຟ້າສວັນ</u>. ຈົ່ງພາກັນມາເຮັດຄວາມໝັ້ນໃຈວ່າພວກເຮົາ**<u>ກຳລັງຍອມຈຳນົນ</u>**ຕໍ່ການຊົງສ້າງທີ່ດີຂອງພຣະເຈົ້າ ແລະ **<u>ກຳລັງນຳພຣະກຽດຕິຍົດມາສູ່ພຣະອົງ</u>**.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**